ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ: 1531 /ອຄ.ກຄພນ.

ນະຄອນຫຼວງວຽງຈັນ, ວັນທີ: 14 ກັນຍາ 2017

# ແຈ້ງການ

**ເຖິງ:** ທ່ານຫົວໜ້າ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ ແລະ ນະຄອນຫຼວງ, ໃນຂອບເຂດທົ່ວປະເທດ.

**ເລື່ອງ:** ກຳນົດຂອບເຂດລາຄາເກັບຊື້ເຂົ້າເປືອກ (ນາປີ ແລະ ນາແຊງ) ເລີ່ມແຕ່ປີ 2018 ເປັນຕົ້ນໄປ.

- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ, ສະບັບເລກທີ 474/ນຍ, ລົງວັນທີ 18/11/2010, ວ່າດ້ວຍການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ;
- ອີງຕາມ ຂໍ້ຕົກລົງ ສະບັບເລກທີ 0346/ອຄ.ກຄພນ, ລົງວັນທີ 15 ມີນາ 2017, ວ່າດ້ວຍການກຳນົດລາຍການສິນຄ້າຄວບຄຸມລາຄາຂອງຂະແໜງອຸດສາຫະກຳ ແລະ ການຄ້າ;
- ອີງຕາມ ບົດແນະນຳ, ສະບັບເລກທີ 1514/ອຄ.ຄພນ, ລົງວັນທີ 30/07/2012, ວ່າດ້ວຍການຄຸ້ມຄອງລາຄາເຂົ້າຢູ່ພາຍໃນແຂວງ.

ເພື່ອເປັນການຊຸກຍູ້ສົ່ງເສີມການຜະລິດເຂົ້າ ໃຫ້ຂະຫຍາຍຕົວ ແລະ ກາຍເປັນສິນຄ້າເທື່ອລະກ້າວ, ຮັບປະກັນທາງດ້ານປະລິມານ ແລະ ຄຸນນະພາບ, ບໍ່ໃຫ້ມີການເອົາລັດເອົາປຽບຊຶ່ງກັນ ແລະ ກັນ ລະຫວ່າງ ຜູ້ຜະລິດ, ຜູ້ຄ້າຂາຍ ແລະ ຜູ້ບໍລິໂພກ, ບໍ່ໃຫ້ມີການສວຍໂອກາດກົດໜ່ວງລາຄາເກັບຊື້ເຂົ້າເປືອກຢ່າງບໍ່ສົມເຫດສົມຜົນຈາກຊາວນາ ແລະ ເຮັດໃຫ້ສັງຄົມມີຄວາມສະຫງົບ.

**ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ, ແຈ້ງມາຍັງຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າແຂວງ ແລະ ນະຄອນຫຼວງ ປະຕິບັດດັ່ງນີ້:**

1. ການກຳນົດຂອບເຂດລາຄາເກັບຊື້ເຂົ້າເປືອກໜຽວ, ເຂົ້າເປືອກຈ້າວ (ນາປີ ແລະ ນາແຊງ) ຕໍ່າສຸດ-ສູງສຸດ ເລີ່ມແຕ່ປີ 2018 ເປັນຕົ້ນໄປ ແມ່ນມອບໃຫ້ພະແນກອຸດສາຫະກຳ ແລະການຄ້າແຂວງ ແລະ ນະຄອນຫຼວງ ເປັນຜູ້ກຳນົດລາຄາເກັບຊື້ພາຍໃນແຂວງຂອງຕົນ ໂດຍອີງຕາມຄຸນນະພາບຂອງເຂົ້າໃນແຕ່ລະທ້ອງຖິ່ນເປັນຫຼັກບວກກັບການກຳນົດອັດຕາກຳໄລໃຫ້ຊາວນາໃນຂອດຜະລິດເຂົ້າເປືອກຢ່າງສົມເຫດສົມຜົນ (ຕໍ່າສຸດບໍ່ໃຫ້ຫຼຸດ 20% ແລະ ສູງສຸດບໍ່ໃຫ້ເກີນ 30%), ເພື່ອຫຼີກເວັ້ນການກົດໜ່ວງລາຄາແບບບໍ່ສົມເຫດສົມຜົນ, ບົນພື້ນຖານປະສານສົມທົບກັບຂະແໜງການກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງ, ກຸ່ມຊາວນາ ແລະ ບັນດາໂຮງສີເຂົ້າພາຍໃນແຂວງ ເພື່ອຄວາມເປັນເອກະພາບ (ຄັດຕິດຮ່າງໂຄງປະກອບຕົ້ນທຶນການຜະລິດເຂົ້າມາພ້ອມນີ້);
2. ພາຍຫຼັງອອກແຈ້ງການກຳນົດລາຄາເກັບຊື້ເຂົ້າເປືອກແລ້ວ ແມ່ນໃຫ້ເຜີຍແຜ່ ແລະ ຊີ້ນຳຜູ້ປະກອບການເພື່ອຈັດຕັ້ງປະຕິບັດ;
3. ການເກັບຊື້ເຂົ້າຕົວຈິງຂອງສອງກຳລັງ (ປກສ, ປກຊ) ແມ່ນສະເໜີໃຫ້ເກັບຊື້ນຳຫົວໜ່ວຍທຸລະກິດ, ສະມາຄົມ ຫຼື ກຸ່ມໂຮງສີເຂົ້າ ທີ່ມີສ່ວນຮ່ວມຮັບຜິດຊອບຄັງແຮເຂົ້າ (ຖ້າມີ), ເກັບຊື້ນຳສະມາຄົມ ຫຼື ກຸ່ມໂຮງສີເຂົ້າທົ່ວໄປພາຍໃນແຂວງຂອງຕົນ, ຖ້າຫາກການເກັບຊື້ເຂົ້າພາຍໃນແຂວງດັ່ງກ່າວຫາກບໍ່ພຽງພໍຕາມຄວາມຕ້ອງການໃຫ້ສົມທົບເກັບຊື້ກັບແຂວງອື່ນ ທີ່ມີທ່າແຮງດ້ານການຜະລິດເຂົ້າ ແລະ ເຄື່ອນຍ້າຍເຂົ້າ ມາສະໜອງໃຫ້ພຽງພໍຕາມຄວາມຕ້ອງການ, ຖ້າແຂວງໃດຫາກບໍ່ມີທຸລະກິດ, ສະມາຄົມ ຫຼື ກຸ່ມໂຮງສີເຂົ້າ ທີ່ມີສ່ວນຮ່ວມຮັບຜິດຊອບຄັງແຮເຂົ້າ, ໃຫ້ສອງກຳລັງດັ່ງກ່າວເກັບຊື້ຈາກບັນດາໂຮງສີທົ່ວໄປ ຫຼື ຈະເກັບຊື້ໂດຍກົງຈາກຊາວນາຜູ້ຜະລິດກໍ່ໄດ້;

4. ພາຍຫຼັງແຕ່ລະແຂວງກຳນົດລາຄາເກັບຊື້ເຂົ້າເປືອກສຳເລັດ, ກະລຸນາແຈ້ງໃຫ້ກົມການຄ້າພາຍໃນຮັບຊາບ ເພື່ອຈະໄດ້ລາຍງານໃຫ້ຂັ້ນເທິງຕໍ່ໄປ;
5. ແຈ້ງການສະບັບນີ້ ປ່ຽນແທນແຈ້ງການສະບັບເລກທີ 1502/ອຄ, ລົງວັນທີ: 24 ສິງຫາ 2016.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ລັດຖະມົນຕີ

ຂຸນມີ ມະນີວົງ

**ບ່ອນສົ່ງ:**
- ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ (ເພື່ອຊາບ );
- ຄະນະນຳກະຊວງ ອຄ (ເພື່ອຊາບ);
- ຫ້ອງວ່າການປົກຄອງແຂວງໃນທົ່ວປະເທດ (ເພື່ອຊີ້ນຳໃນການຈັດຕັ້ງປະຕິບັດ);
- ຫ້ອງການ, ສະຖາບັນ ແລະ ບັນດາກົມອ້ອມຂ້າງຂອງກະຊວງ (ເພື່ອນຊາບ);
- ສຳເນົາ.